ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 14 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 10 JUN 2021

# ຂໍ້ຕົກລົງ
# ວ່າດ້ວຍການຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ
# (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ສະບັບເລກທີ 79/ສພຊ ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 146/ສຄຄຊ, ລົງວັນທີ 27 ພຶດສະພາ 2021.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວຂອງ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ເພື່ອອຳນວຍຄວາມສະດວກ ແລະ ເປັນບ່ອນອີງໃຫ້ແກ່ການບໍລິການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ແນໃສ່ຮັບປະກັນເຮັດໃຫ້ການບໍລິການດັ່ງກ່າວມີປະສິດທິພາບ, ຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 2 (ປັບປຸງ) ການຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ**

ການຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ແມ່ນການອະນຸຍາດໃຫ້ ທະນາຄານທຸລະກິດ, ບໍລິສັດຫຼັກຊັບ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ ຫຼື ທະນາຄານທຸລະກິດ, ບໍລິສັດຫຼັກຊັບ ຕ່າງປະເທດ ສາມາດໃຫ້ບໍລິການເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານຢູ່ ສປປ ລາວ ຕາມຂອບເຂດການໃຫ້ບໍລິການຂອງ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຖືຮຸ້ນກູ້ ແລະ/ຫຼື ພັນທະບັດລັດຖະບານ** ໝາຍເຖິງ ຜູ້ລົງທຶນ ປະເພດ ບຸກຄົນ ຫຼື ສະຖາບັນ ທັງພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນຊື້ ແລະ ຖືຄອງຮຸ້ນກູ້ ແລະ/ຫຼື ພັນທະບັດລັດຖະບານ;

2. **ຜູ້ອອກຈຳໜ່າຍຮຸ້ນກູ້** ໝາຍເຖິງ ບໍລິສັດທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການນຳເອົາຮຸ້ນກູ້ຂອງຕົນອອກຈຳໜ່າຍຢູ່ ສປປ ລາວ;

3. **ຜູ້ອອກຈຳໜ່າຍພັນທະບັດລັດຖະບານ** ໝາຍເຖິງ ກະຊວງການເງິນຂອງ ສປປ ລາວ ເປັນຜູ້ອອກຈຳໜ່າຍພັນທະບັດລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. **ຜູ້ຄ້ຳປະກັນການຊຳລະໜີ້** ໝາຍເຖິງ ທະນາຄານທຸລະກິດ ຫຼື ສະຖາບັນການເງິນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນກູ້;

5. **ຜູ້ຖືຮຸ້ນລາຍໃຫຍ່** ໝາຍເຖິງ ຜູ້ທີ່ຖືຮຸ້ນຂອງ ບໍລິສັດອອກຈຳໜ່າຍຮຸ້ນ ຫຼື ບໍລິສັດຈົດທະບຽນ ຫ້າສ່ວນຮ້ອຍ (5%) ຂຶ້ນໄປ ຂອງຈຳນວນຮຸ້ນທັງໝົດທີ່ມີສິດອອກສຽງຂອງບໍລິສັດ;

6. **ສັນຍາແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ** ໝາຍເຖິງ ສັນຍາລະຫວ່າງຜູ້ອອກຈຳໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ກັບ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ທີ່ໄດ້ກຳນົດ ກ່ຽວກັບ ສິດ, ໜ້າທີ່ ແລະ ພັນທະຂອງຄູ່ສັນຍາ;

7. **ໃບຮຸ້ນກູ້ລວມ** ໝາຍເຖິງ ໃບຮຸ້ນກູ້ທີ່ບໍ່ໄດ້ບົ່ງຊື່ຂອງຜູ້ຖື ຊຶ່ງຜູ້ອອກຈຳໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕ້ອງນຳໄປຝາກໄວ້ຢູ່ ສູນຮັບຝາກຫຼັກຊັບ;

8. **ໃບຢັ້ງຢືນການຖືຄອງຮຸ້ນກູ້ ແລະ ພັນທະບັດລັດຖະບານ** ໝາຍເຖິງ ເອກະສານທີ່ຢັ້ງຢືນ ປະເພດ, ຈຳນວນ ແລະ ມູນຄ່າ ຮຸ້ນກູ້ ຫຼື ພັນທະບັດລັດຖະບານ ໃຫ້ແກ່ຜູ້ລົງທຶນ ພາຍຫຼັງສຳເລັດການຈັດສັນ ຮຸ້ນກູ້ ຫຼື ພັນທະບັດລັດຖະບານ;

9. **ກຳມະການທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ** ໝາຍເຖິງ ກຳມະການຂອງສະພາບໍລິຫານຂອງ ຜູ້ອອກຈຳໜ່າຍຮຸ້ນກູ້ ທີ່ບໍ່ດຳລົງຕຳແໜ່ງເປັນຄະນະອຳນວຍການ.

**ມາດຕາ 4 ຫຼັກການ**

ການເຄື່ອນໄຫວເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ຊຸກຍູ້ ແລະ ສົ່ງເສີມຕະຫຼາດທຶນ ໃຫ້ມີການພັດທະນາແບບຍືນຍົງ;
2. ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ;
3. ປ້ອງກັນ ແລະ ຫລຸດຜ່ອນຄວາມສ່ຽງ ຕໍ່ລະບົບການເງິນ;
4. ຮັບປະກັນໃຫ້ມີປະສິດທິພາບ, ຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໃຫ້ບໍລິການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ.

## ໝວດທີ 2
## ການຂໍຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ

**ມາດຕາ 6 (ໃໝ່) ການຂໍຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ**

ທະນາຄານທຸລະກິດ ຫຼື ບໍລິສັດຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຂໍການຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ແລະ ປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ເພື່ອຍື່ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພິຈາລະນາ.

**ມາດຕາ 7 (ປັບປຸງ) ເງື່ອນໄຂຂໍການຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ**

ທະນາຄານທຸລະກິດ ຫຼື ບໍລິສັດຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຂໍການຮັບຮອງເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 105.

**ມາດຕາ 8 (ປັບປຸງ) ເອກະສານປະກອບການຂໍຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ**

ທະນາຄານທຸລະກິດ ຫຼື ບໍລິສັດຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຂໍການຮັບຮອງເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕ້ອງປະກອບເອກະສານຂໍອະນຸຍາດເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕາມທີ່ໄດ້ກຳນົດໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 106. ນອກຈາກນັ້ນ ຍັງຕ້ອງມີເອກະສານເພີ່ມເຕີມ ດັ່ງນີ້:

1. ແຜນການເຄື່ອນໄຫວທຸລະກິດ ກ່ຽວກັບການໃຫ້ບໍລິການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ;
2. ລະບຽບການ ແລະ ຄູ່ມື ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ;
3. ຊີວະປະຫວັດຫຍໍ້ຂອງ ຜູ້ບໍລິຫານ ແລະ ພະນັກງານທີ່ປະຕິບັດໜ້າທີ່ ກ່ຽວກັບການເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ;
4. ໃບຢັ້ງຢືນວຸດທິການສຶກສາ ແລະ ໃບຢັ້ງຢືນການຝຶກອົບຮົມຂອງ ຜູ້ບໍລິຫານ ແລະ ພະນັກງານທີ່ປະຕິບັດໜ້າທີ່ ກ່ຽວກັບການເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ (ຖ້າມີ);
5. ໃບແຈ້ງໂທດຂອງ ຜູ້ບໍລິຫານ ຂອງຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ;
6. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 9 (ປັບປຸງ) ການພິຈາລະນາການຂໍຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາການຂໍຮັບຮອງເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ພາຍໃນເວລາ 30 ວັນ ນັບແຕ່ວັນໄດ້ຮັບເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີປະຕິເສດ ກໍໃຫ້ແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາການຂໍຮັບຮອງເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຫາກເຫັນວ່າມີຄວາມຈຳເປັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາ ຊີ້ແຈງ ຫຼື ໃຫ້ຂໍ້ມູນ.

ພາຍຫຼັງໄດ້ຮັບໃບຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບແລ້ວ ຕ້ອງປະກາດຕໍ່ມວນຊົນ ຜ່ານພາຫະນະສື່ມວນຊົນ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບໃບຮັບຮອງ ເປັນຕົ້ນໄປ.

## ໝວດທີ 3
## ຂອບເຂດການໃຫ້ບໍລິການ, ອາຍຸການຮັບຮອງ ແລະ ການຕໍ່ອາຍຸການຮັບຮອງຂອງ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ

**ມາດຕາ 10 (ໃໝ່) ຂອບເຂດການໃຫ້ບໍລິການຂອງຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ**

ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ສາມາດເຄື່ອນໄຫວໃຫ້ບໍລິການ ເປັນຜູ້ຕາງໜ້າໃຫ້ແກ່ຜູ້ລົງທຶນ ໃນການຕິດຕາມການປະຕິບັດ ສິດ ແລະ ໜ້າທີ່ ຂອງຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 107.

**ມາດຕາ 11 (ໃໝ່) ອາຍຸການຮັບຮອງຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ**

ໃບຮັບຮອງຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ມີອາຍຸການ 3 ປີ ນັບແຕ່ວັນທີ່ໄດ້ຮັບການຮັບຮອງ ເປັນຕົ້ນໄປ.

**ມາດຕາ 12 (ໃໝ່) ການຕໍ່ອາຍຸການຮັບຮອງຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ**

ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ທີ່ຕ້ອງການຕໍ່ອາຍຸການຮັບຮອງ ເພື່ອສືບຕໍ່ໃຫ້ບໍລິການ ເປັນຜູ້ຕາງໜ້າໃຫ້ແກ່ຜູ້ລົງທຶນ ໃນການຕິດຕາມການປະຕິບັດ ສິດ ແລະ ໜ້າທີ່ ຂອງຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕ້ອງມີເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 7 ແລະ ປະກອບເອກະສານຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ເພື່ອຍື່ນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພິຈາລະນາ ຢ່າງໜ້ອຍ 45 ວັນ ກ່ອນວັນໝົດອາຍຸການຮັບຮອງ.

## ໝວດທີ 4
## ສິດ ແລະ ໜ້າທີ່ ຂອງຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ, ຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ແລະ ຜູ້ຖືຮຸ້ນກູ້ ແລະ/ຫຼື ພັນທະບັດລັດຖະບານ

**ມາດຕາ 13 (ປັບປຸງ) ສິດ ແລະ ໜ້າທີ່ຂອງຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ**

ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 108. ນອກຈາກນັ້ນ ຍັງມີສິດ ແລະ ໜ້າທີ່ເພີ່ມເຕີມ ດັ່ງນີ້:

1. ສ້າງ ກົນໄກ, ກົດລະບຽບ ແລະ ຄູ່ມື ໃນການຈັດຕັ້ງປະຕິບັດພາຍໃນທີ່ຕິດພັນກັບການໃຫ້ບໍລິການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ;
2. ຕິດຕາມ ກວດກາ ແລະ ຊຸກຍູ້ໃຫ້ ຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ເປີດເຜີຍຂໍ້ມູນ ແລະ ເຫດການສໍາຄັນຕ່າງໆ ຜ່ານພາຫະນະສື່ມວນຊົນຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງ ຄະນະກໍາມະການຄຸ້ມຄອງຫຼັກຊັບ;

3. ຮຽກຮ້ອງໃຫ້ ເປີດ ແລະ ດຳເນີນ ກອງປະຊຸມຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ເພື່ອຂໍມະຕິກອງປະຊຸມຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ພາຍໃນເວລາ 15 ວັນ ນັບແຕ່ວັນທີ່ຮັບຮູ້ຂໍ້ມູນເປັນຕົ້ນໄປ ໃນກໍລະນີ ຜູ້ອອກຈຳໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ບໍ່ສາມາດຊຳລະຕົ້ນທຶນ ແລະດອກເບ້ຍ ຫຼື ບໍ່ສາມາດປະຕິບັດຕາມເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນໃບຮຸ້ນກູ້ລວມ ແລະ ໃບຢັ້ງຢືນການຖືຄອງຮຸ້ນກູ້ ຍົກເວັ້ນ ກໍລະນີ ສັນຍາແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ ໄດ້ກຳນົດເປັນຢ່າງອື່ນ. ຕົວແທນຜູ້ຖືຮຸ້ນກູ້ ແລະພັນທະບັດລັດຖະບານ ຕ້ອງແຈ້ງຢ່າງເປັນລາຍລັກອັກສອນໃຫ້ ຜູ້ຖືຮຸ້ນກູ້ ແລະ/ຫຼື ພັນທະບັດລັດຖະບານຊາບລ່ວງໜ້າ ຢ່າງໜ້ອຍ 7 ວັນ ລັດຖະການ ກ່ອນເປີດກອງປະຊຸມຜູ້ຖືຮຸ້ນກູ້ ແລະ/ຫຼື ພັນທະບັດລັດຖະບານ;

4. ຮຽກຮ້ອງເອົາຂໍ້ມູນທີ່ຕິດພັນກັບ ຮຸ້ນກູ້ ແລະ ພັນທະບັດລັດຖະບານ ຈາກຕະຫຼາດຫຼັກຊັບ;

5. ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງ ຜູ້ອອກຈຳໜ່າຍຮຸ້ນກູ້;

6. ປະຕິບັດພັນທະຕາມການມອບໝາຍຂອງ ຜູ້ຖືຮຸ້ນກູ້ ແລະ/ພັນທະບັດລັດຖະບານ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງຜູ້ອອກຈຳໜ່າຍຮຸ້ນກູ້**

ຜູ້ອອກຈຳໜ່າຍຮຸ້ນກູ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສົ່ງໜັງສືແຈ້ງໃຫ້ແກ່ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ທັນທີ ເມື່ອມີເຫດໃດໜຶ່ງເກີດຂຶ້ນ ດັ່ງນີ້:

1.1 ຜິດນັດຊຳລະ ຕົ້ນທຶນ ຫຼື ດອກເບ້ຍ;

1.2 ຜູ້ອອກຈຳໜ່າຍຮຸ້ນກູ້ ຖືກດຳເນີນຄະດີ ຫຼື ຖືກກ່າວຫາໃຫ້ເປັນຝ່າຍຮັບຜິດຊອບ ໃນຂໍ້ຂັດແຍ່ງໃດໜຶ່ງ ຊຶ່ງອາດມີຜົນກະທົບຢ່າງຮ້າຍແຮງຕໍ່ ຄວາມສາມາດໃນການຊຳລະຕົ້ນທຶນ ຫຼື ດອກເບ້ຍ;

1.3 ມີການປ່ຽນແປງ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕາມກຳນົດເວລາ ທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດ.

2. ສົ່ງສຳເນົາ ເອກະສານການປະເມີນມູນຄ່າຊັບສິນ ລາຄາຊັບສິນທີ່ເປັນຫຼັກຊັບຄ້ຳປະກັນຈາກ ຜູ້ປະເມີນມູນຄ່າຊັບສິນ ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 60 ວັນ ນັບແຕ່ວັນທີ່ສິ້ນສຸດການປະເມີນຊັບສິນ ໃຫ້ແກ່ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຫຼື ວັນທີຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຮຽກຮ້ອງ ເປັນຕົ້ນໄປ;

3. ສົ່ງສຳເນົາ ຫຼື ຜົນການຈັດລຳດັບຄວາມໜ້າເຊື່ອຖືຂອງ ຜູ້ອອກຈຳໜ່າຍຮຸ້ນກູ້ ກໍລະນີທີ່ຜົນການຈັດລຳດັບຄວາມໜ້າເຊື່ອຖືມີການປ່ຽນແປງ ໃຫ້ແກ່ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ;

4. ຊຳລະ ຕົ້ນທຶນ ແລະ ດອກເບ້ຍ ຕາມມູນຄ່າຮຸ້ນກູ້ ເມື່ອຄົບກຳນົດເວລາຊຳລະດອກເບ້ຍ ແລະໄຖ່ຖອນຮຸ້ນກູ້;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ໜັງສືຊວນຊື້ ແລະ ໃບຮຸ້ນກູ້.

**ມາດຕາ 15 ສິດ ແລະ ໜ້າທີ່ຂອງຜູ້ອອກຈຳໜ່າຍພັນທະບັດລັດຖະບານ**

ຜູ້ອອກຈຳໜ່າຍພັນທະບັດລັດຖະບານ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 16 ສິດ ແລະ ໜ້າທີ່ຂອງ ຜູ້ຖືຮຸ້ນກູ້ ແລະ/ຫຼື ພັນທະບັດລັດຖະບານ**

ຜູ້ຖືຮຸ້ນກູ້ ແລະ/ຫຼື ພັນທະບັດລັດຖະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໄດ້ຮັບຂໍ້ມູນຂ່າວສານ ແລະ ສາມາດກວດສອບເອກະສານ ທີ່ກ່ຽວຂ້ອງກັບການເຄື່ອນໄຫວທຸລະກິດຂອງ ຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕາມລະບຽບການ;

2. ສະເໜີ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ເພື່ອເປີດປະຊຸມຜູ້ຖືຮຸ້ນກູ້ ແລະ/ຫຼື ພັນທະບັດລັດຖະບານ ແລະ ເຂົ້າຮ່ວມກອງປະຊຸມ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 13 ຂໍ້ 3 ຂອງຂໍ້ຕົກລົງສະບັບນີ້;

3. ຮຽກຮ້ອງໃຫ້ຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ຊໍາລະຕົ້ນທຶນ ແລະ ດອກເບ້ຍ ຕາມທີ່ໄດ້ກໍານົດໃນໃບຮຸ້ນກູ້ ເມື່ອຄົບກໍານົດເວລາຊໍາລະດອກເບ້ຍ ແລະ ໄຖ່ຖອນຮຸ້ນກູ້ ແລະ ພັນທະບັດລັດຖະບານ;

4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ໜັງສືຊວນຊື້ ແລະ ໃບຮຸ້ນກູ້.

## ໝວດທີ 5
## ການລາຍງານ, ການໂຈະ, ການຖອນ, ຄ່າບໍລິການ ແລະ ຂໍ້ຫ້າມ

**ມາດຕາ 17 ການລາຍງານ**

ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕ້ອງລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ດັ່ງລຸ່ມນີ້:

1. ການປ່ຽນແປງລະບຽບການ ແລະ ຄູ່ມື ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນທີ່ມີການປ່ຽນແປງເປັນຕົ້ນໄປ;

2. ການປ່ຽນແປງຜູ້ບໍລິຫານ ຫຼື ພະນັກງານທີ່ປະຕິບັດໜ້າທີ່ ທາງດ້ານການເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ພາຍໃນເວລາ 2 ວັນ ລັດຖະການ ນັບແຕ່ມື້ປ່ຽນແປງ;

3. ການເຄື່ອນໄຫວໃຫ້ບໍລິການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ປະຈໍາໄຕມາດ 1 ແລະ ໄຕມາດ 3 ພາຍໃນເວລາ 15 ວັນ ລັດຖະການ ນັບແຕ່ວັນສິ້ນສຸດ ໄຕມາດ 1 ແລະ ໄຕມາດ 3 ເປັນຕົ້ນໄປ, ປະຈໍາ 6 ເດືອນຕົ້ນປີ ພາຍໃນເວລາ 30 ວັນ ນັບແຕ່ວັນສິ້ນສຸດໄຕມາດສອງ ເປັນຕົ້ນໄປ ແລະ ປະຈໍາປີ ພາຍໃນໄຕມາດ 1 ຂອງປີຖັດໄປ;

4. ການເຄື່ອນໄຫວຂອງຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ທີ່ເຫັນວ່າອາດສົ່ງຜົນກະທົບຕໍ່ ສິດ ແລະ ຜົນປະໂຫຍດຂອງ ຜູ້ຖືຮຸ້ນກູ້ ແລະ/ຫຼື ພັນທະບັດລັດຖະບານ;

5. ລາຍງານອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕ້ອງເກັບຮັກສາເອກະສານການລາຍງານ ແລະ ຂໍ້ມູນຕ່າງໆ ທີ່ຕິດພັນກັບການເຄື່ອນໄຫວໃຫ້ບໍລິການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ໄວ້ເປັນຢ່າງດີ ແລະ ຕ້ອງເກັບຮັກສາໄວ້ ຢ່າງໜ້ອຍ 10 ປີ.

ຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕ້ອງສົ່ງລາຍງານ ໃຫ້ແກ່ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ພາຍໃນເວລາ ດັ່ງນີ້:

1. ສໍາເນົາເອກະສານລາຍງານການເງິນປະຈໍາ ໄຕມາດ 1 ແລະ ໄຕມາດ 3 ພາຍໃນເວລາ 15 ວັນ ນັບແຕ່ວັນສິ້ນສຸດ ໄຕມາດ 1 ແລະ ໄຕມາດ 3 ເປັນຕົ້ນໄປ;

2. ສຳເນົາເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນປີ ພາຍໃນເວລາ 60 ວັນ ນັບແຕ່ວັນສິ້ນສຸດໄຕມາດ 2 ເປັນຕົ້ນໄປ;

3. ສຳເນົາບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີ ແລະ ເອກະສານລາຍງານການເງິນ ປະຈຳປີ ພາຍໃນເວລາ 120 ວັນ ພາຍຫຼັງສິ້ນສຸດປີການບັນຊີ ເປັນຕົ້ນໄປ;

4. ສະໜອງບົດລາຍງານ ແລະ ເອກະສານ ທີ່ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຮຽກຮ້ອງຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 18 (ປັບປຸງ) ການໂຈະການຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ**

ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຈະຖືກໂຈະການຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 110.

**ມາດຕາ 19 (ປັບປຸງ) ການຖອນໃບຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ**

ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຈະຖືກຖອນການຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 110.

**ມາດຕາ 20 (ປັບປຸງ) ຄ່າບໍລິການ**

ທະນາຄານທຸລະກິດ ຫຼື ບໍລິສັດຫຼັກຊັບທີ່ມີຈຸດປະສົງຂໍການຮັບຮອງເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕ້ອງເສຍຄ່າບໍລິການໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄ່າຍື່ນສຳນວນຄຳຮ້ອງຂໍການຮັບຮອງເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຈຳນວນ 1.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຍື່ນສຳນວນຄຳຮ້ອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

2. ຄ່າອອກໃບຮັບຮອງເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຈຳນວນ 3.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຮັບໃບຮັບຮອງ;

3. ຄ່າຕໍ່ໃບຮັບຮອງເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຈຳນວນ 3.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນວັນໄດ້ຮັບໃບຮັບຮອງ;

4. ຄ່າຄຸ້ມຄອງປະຈຳປີ ຈຳນວນ 5.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນ ໄຕມາດ 1 ຂອງປີຖັດໄປ.

ໃນກໍລະນີ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ບໍ່ໄດ້ໃຫ້ບໍລິການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ໃນປີໃດໜຶ່ງ ແມ່ນຈະບໍ່ໄດ້ເສຍຄ່າຄຸ້ມຄອງປະຈຳປີຂອງປີນັ້ນ. ສຳລັບ ບໍລິສັດຫຼັກຊັບ ແລະ ທະນາຄານດູແລຊັບສິນ ຈະຖືກຍົກເວັ້ນຄ່າຄຸ້ມຄອງປະຈຳປີ.

**ມາດຕາ 21 ຂໍ້ຫ້າມ**

ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ແລະ ຜູ້ບໍລິຫານ ຫ້າມມີພຶດຕິກຳໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 183. ນອກຈາກນັ້ນ ຍັງຫ້າມມີພຶດຕິກຳດັ່ງນີ້:

1. ເປັນຜູ້ຄ້ຳປະກັນການຊຳລະໜີ້ຂອງ ຜູ້ອອກຈຳໜ່າຍຮຸ້ນກູ້;

2. ເປັນຜູ້ຖືຮຸ້ນຂອງຜູ້ອອກຈຳໜ່າຍຮຸ້ນກູ້ ທີ່ມີສິດອອກສຽງ ນັບແຕ່ ຫ້າສ່ວນຮ້ອຍ (5%) ຂຶ້ນໄປ ຂອງ ຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດ;

3. ໃຫ້ຜູ້ອອກຈຳໜ່າຍຮຸ້ນກູ້ຖືຮຸ້ນຂອງຕົນ ນັບແຕ່ ຫ້າສ່ວນຮ້ອຍ (5%) ຂຶ້ນໄປ ຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດ;

4. ໃຫ້ຜູ້ຖືຮຸ້ນລາຍໃຫຍ່ຂອງຕົນ ຖືຮຸ້ນຂອງຜູ້ອອກຈຳໜ່າຍຮຸ້ນກູ້ ນັບແຕ່ ຫ້າສ່ວນຮ້ອຍ (5%) ຂຶ້ນໄປ;

5. ມີສະມາຊິກສະພາບໍລິຫານທີ່ເປັນບຸກຄົນດຽວກັນກັບຜູ້ອອກຈຳໜ່າຍຮຸ້ນກູ້ ເວັ້ນແຕ່ ບຸກຄົນນັ້ນເປັນກຳມະການທີ່ບໍ່ມີສ່ວນຮ່ວມໃນການບໍລິຫານຂອງ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ;

6. ເປັນຄູ່ສັນຍາກັບຜູ້ອອກຈຳໜ່າຍຮຸ້ນກູ້ ທີ່ມີເນື້ອໃນເຮັດໃຫ້ບໍ່ສາມາດປະຕິບັດສິດ ແລະ ໜ້າທີ່ຂອງຕົນໃນການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ;

7. ໃຫ້ບຸກຄົນອື່ນ ປະຕິບັດໜ້າທີ່ເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ແທນຕົນ;

8. ນຳເອົາຊັບສິນທີ່ເປັນຫຼັກຊັບຄ້ຳປະກັນ ຊຶ່ງຢູ່ໃນການຄຸ້ມຄອງຂອງຕົນ ເພື່ອສະແຫວງຫາຜົນປະໂຫຍດ ຫຼື ໃຫ້ບຸກຄົນອື່ນນຳໄປໃຊ້. ຍົກເວັ້ນທີ່ລະບຸໄວ້ໃນໃບແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ;

9. ຊື້ຫຼັກຊັບຄ້ຳປະກັນ ທີ່ຄ້ຳປະກັນການຊຳລະໜີ້ສິນຂອງຮຸ້ນກູ້ ໂດຍທາງກົງ ຫຼື ທາງອ້ອມ ຂອງຜູ້ອອກຈຳໜ່າຍຮຸ້ນກູ້ ຫຼື ຜູ້ຄ້ຳປະກັນການຊຳລະໜີ້ ຢູ່ໃນໄລຍະການດຳເນີນຄະດີ;

10. ຮັບຊັບສິນ ຫຼື ປະໂຫຍດອື່ນ ໂດຍທາງກົງ ຫຼື ທາງອ້ອມ ຈາກບຸກຄົນໃດໜຶ່ງ ທີ່ມາຊື້ຫຼັກຊັບຄ້ຳປະກັນ ຫຼື ຊັບສິນຂອງ ຜູ້ຄ້ຳປະກັນການຊຳລະໜີ້ ຫຼື ຜູ້ອອກຈຳໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ທີ່ຢູ່ໃນໄລຍະການດຳເນີນຄະດີ ເພື່ອການຊຳລະໜີ້ສິນຂອງຮຸ້ນກູ້;

11. ຮັບຜົນປະໂຫຍດ ຫຼື ສິ່ງຕອບແທນອື່ນຈາກ ການດຳເນີນການຮຽກຮ້ອງ ຫຼື ຮ້ອງຟ້ອງຄ່າເສຍຫາຍ ແທນຜູ້ລົງທຶນ ໃນການນຳໃຊ້ຫຼັກຊັບຄ້ຳປະກັນ ຫຼື ຊັບສິນ ເພື່ອຊຳລະໜີ້ສິນຂອງຮຸ້ນກູ້ ນອກເໜືອຈາກຜົນປະໂຫຍດທີ່ໄດ້ຕົກລົງໄວ້ໃນໃບແຕ່ງຕັ້ງ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ;

12. ມີພຶດຕິກຳໃດໜຶ່ງທີ່ເປັນການສ້າງ ຫຼື ອາດສ້າງຄວາມເສຍຫາຍແກ່ຜູ້ລົງທຶນ;

13. ຫັກເງິນທີ່ຕ້ອງແຈກຈ່າຍໃຫ້ແກ່ຜູ້ຖືຮຸ້ນກູ້ ຊຶ່ງໄດ້ມາຈາກການຮຽກຮ້ອງ ຫຼື ຮ້ອງຟ້ອງຄ່າເສຍຫາຍແທນຜູ້ລົງທຶນ ໃນກໍລະນີ ຜູ້ອອກຈຳໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ມີການລະເມີດການຊຳລະຕົ້ນທຶນ ແລະ ດອກເບ້ຍ;

14. ລາຍງານສະພາບການເຄື່ອນໄຫວໃຫ້ບໍລິການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານຂອງຕົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລ່າຊ້າກວ່າກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້;

15. ບໍ່ລາຍງານ, ເຈດຕະນາລາຍງານບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ເຊື່ອງຊ້ອນຂໍ້ມູນ ທີ່ກ່ຽວຂ້ອງກັບການເຄື່ອນໄຫວໃຫ້ບໍລິການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານຂອງຕົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

16. ມີພຶດຕິກຳອື່ນ ທີ່ລະເມີດລະບຽບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

17. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

# ໝວດທີ 6
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 22 ນະໂຍບາຍຕໍ່ຜູ້ມີຜົນງານ**

ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໃຫ້ບໍລິການເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 23 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໃຫ້ບໍລິການເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ ຫຼື ກ່າວເຕືອນ, ປັບໃໝ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ເປັນຕົ້ນ ຍື່ນເອກະສານຂໍຕໍ່ອາຍຸການຮັບຮອງການໃຫ້ບໍລິການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ກ່ອນວັນທີ່ໃບຮັບຮອງ ຈະໝົດອາຍຸຕໍ່າກວ່າ 45 ວັນ, ບໍ່ໃຫ້ການຮ່ວມມືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ກໍລະນີການລະເມີດອື່ນທີ່ສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;
2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືເສຍຫາຍ ແລະ ຄູ່ກໍລະນີ ສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;
3. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງຂໍ້ຕົກລົງສະບັບນີ້;
4. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ການເປັນລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດສ້າງຄວາມເສຍຫາຍເກີນ 1.000.000 ກີບ ຫຼື ຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດເປັນຄັ້ງທີ 2 ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ;
2. ເປັນຜູ້ຄ້ຳປະກັນການຊຳລະໜີ້ຂອງ ຜູ້ອອກຈຳໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ;
3. ເປັນຜູ້ຖືຮຸ້ນ ຂອງຜູ້ອອກຈຳໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ທີ່ມີສິດອອກສຽງ ນັບແຕ່ຫ້າສ່ວນຮ້ອຍ (5%) ຂຶ້ນໄປ ຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ;

4. ໃຫ້ຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ຖືຮຸ້ນຂອງຕົນ ນັບແຕ່ ຫ້າສ່ວນຮ້ອຍ (5%) ຂຶ້ນໄປ ຂອງຈໍານວນຮຸ້ນທີ່ມີສິດອອກສຽງທັງໝົດ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ;

5. ໃຫ້ຜູ້ຖືຮຸ້ນລາຍໃຫຍ່ຂອງຕົນ ຖືຮຸ້ນຂອງຜູ້ອອກຈໍາໜ່າຍຮຸ້ນກູ້ ນັບແຕ່ ຫ້າສ່ວນຮ້ອຍ (5%) ຂຶ້ນໄປ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ;

6. ມີສະມາຊິກສະພາບໍລິຫານທີ່ເປັນບຸກຄົນດຽວກັນກັບ ຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ເວັ້ນແຕ່ ບຸກຄົນນັ້ນເປັນກໍາມະການທີ່ບໍ່ມີສ່ວນຮ່ວມໃນການບໍລິຫານຂອງ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ແລະ ຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ;

7. ເປັນຄູ່ສັນຍາກັບຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ທີ່ມີເນື້ອໃນເຮັດໃຫ້ບໍ່ສາມາດປະຕິບັດສິດ ແລະ ໜ້າທີ່ຂອງຕົນໃນການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ;

8. ໃຫ້ບຸກຄົນອື່ນ ປະຕິບັດໜ້າທີ່ເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ແທນຕົນ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ;

9. ນໍາເອົາຊັບສິນທີ່ເປັນຫຼັກຊັບຄໍ້າປະກັນ ຊຶ່ງຢູ່ໃນການຄຸ້ມຄອງຂອງຕົນ ເພື່ອສະແຫວງຫາຜົນປະໂຫຍດ ຫຼື ໃຫ້ບຸກຄົນອື່ນນໍາໄປໃຊ້. ຍົກເວັ້ນທີ່ລະບຸໄວ້ໃນໃບແຕ່ງຕັ້ງ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ;

10. ຊື້ຫຼັກຊັບຄໍ້າປະກັນ ທີ່ຄໍ້າປະກັນການຊໍາລະໜີ້ສິນຂອງຮຸ້ນກູ້ ໂດຍທາງກົງ ຫຼື ທາງອ້ອມ ຂອງຜູ້ອອກຈໍາໜ່າຍຮຸ້ນກູ້ ຫຼື ຜູ້ຄໍ້າປະກັນການຊໍາລະໜີ້ ຢູ່ໃນໄລຍະການດໍາເນີນຄະດີ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ;

11. ຮັບຊັບສິນ ຫຼື ປະໂຫຍດອື່ນ ໂດຍທາງກົງ ຫຼື ທາງອ້ອມ ຈາກບຸກຄົນໃດໜຶ່ງ ທີ່ມາຊື້ຫຼັກຊັບຄໍ້າປະກັນ ຫຼື ຊັບສິນ ຂອງຜູ້ຄໍ້າປະກັນການຊໍາລະໜີ້ ຫຼື ຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ທີ່ຢູ່ໃນໄລຍະການດໍາເນີນຄະດີ ເພື່ອການຊໍາລະໜີ້ສິນຂອງຮຸ້ນກູ້ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ;

12. ຮັບຜົນປະໂຫຍດ ຫຼື ສິ່ງຕອບແທນອື່ນ ຈາກການດໍາເນີນການຮຽກຮ້ອງ ຫຼື ຮ້ອງຟ້ອງຄ່າເສຍຫາຍ ແທນຜູ້ລົງທຶນ ໃນການນໍາໃຊ້ຫຼັກຊັບຄໍ້າປະກັນ ຫຼື ຊັບສິນ ເພື່ອຊໍາລະໜີ້ສິນຂອງຮຸ້ນກູ້ ນອກເໜືອຈາກຜົນປະໂຫຍດທີ່ໄດ້ຕົກລົງໄວ້ໃນໃບແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ;

13. ມີພຶດຕິກໍາໃດໜຶ່ງທີ່ເປັນການສ້າງ ຫຼື ອາດສ້າງຄວາມເສຍຫາຍແກ່ຜູ້ລົງທຶນ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ;

14. ຫັກເງິນທີ່ຕ້ອງແຈກຈ່າຍໃຫ້ແກ່ຜູ້ຖືຮຸ້ນກູ້ ຊຶ່ງໄດ້ມາຈາກການຮຽກຮ້ອງ ຫຼື ຮ້ອງຟ້ອງຄ່າເສຍຫາຍ ແທນຜູ້ລົງທຶນ ໃນກໍລະນີ ຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ມີການລະເມີດການຊໍາລະຕົ້ນທຶນ ແລະ ດອກເບ້ຍ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ;

15. ບໍ່ເກັບຮັກສາເອກະສານການລາຍງານ ແລະ ຂໍ້ມູນຕ່າງໆທີ່ຕິດພັນກັບການໃຫ້ບໍລິການເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ໃນໄລຍະເວລາທີ່ຕົນໃຫ້ບໍລິການ ແລະ ພາຍຫຼັງສໍາເລັດການໃຫ້ບໍລິການດັ່ງກ່າວ ເປັນເວລາ 10 ປີ ຈະຖືກປັບໃໝ 50.000.000 ກີບ;

16. ລາຍງານການເຄື່ອນໄຫວວຽກງານຂອງຕົນຊັກຊ້າ ແຕ່ 1 ວັນ ຫາ 10 ວັນ ລັດຖະການ ຈະຖືກປັບໃໝ 3.000.000 ກີບ ຕໍ່ວັນ;

17. ລາຍງານການເຄື່ອນໄຫວອຽກງານຂອງຕົນຊັກຊ້າ ຫຼາຍກວ່າ 10 ວັນ ລັດຖະການ ຖືວ່າບໍ່ລາຍງານ ຈະຖືກປັບໃໝ 30.000.000 ກີບ;

18. ລາຍງານສະພາບການເຄື່ອນໄຫວໃຫ້ບໍລິການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານຂອງຕົນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ລ່າຊ້າກວ່າກໍານົດເວລາ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ 10.000.000 ຕໍ່ຄັ້ງ;

19. ບໍ່ລາຍງານ, ເຈດຕະນາລາຍງານບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ເຊື່ອງຊ້ອນຂໍ້ມູນ ທີ່ກ່ຽວຂອງກັບການເຄື່ອນໄຫວໃຫ້ບໍລິການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານຂອງຕົນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ 10.000.000 ຕໍ່ຄັ້ງ.

ມາດຕະການເພີ່ມເຕີມຕໍ່ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນ ໃຫ້ຖືກຕ້ອງຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໂຈະການໃຫ້ບໍລິການເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ;

3. ຖອນໃບຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ;

4. ເປີດເຜີຍ ກ່ຽວກັບການລະເມີດຂໍ້ຫ້າມ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 24 ການຈັດຕັ້ງປະຕິບັດ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໃຫ້ບໍລິການເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 25 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍຕົວແທນຜູ້ຖືຮຸ້ນກູ້ ສະບັບເລກທີ 17/ຄຄຊ, ລົງວັນທີ 3 ກັນຍາ 2018.

ປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ

ຄະນະກໍາມະການຄຸ້ມຄອງຫຼັກຊັບ
ປະທານ

ສອນໄຊ ສິດພະໄຊ